ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1061 /ຫຄຊກລ.ກກ
ນະຄອນຫຼວງວຽງຈັນ, ວັນທີ 08 ຕຸລາ 2024

# ບົດບັນທຶກ

## ກອງປະຊຸມກຸ່ມວິຊາການ ສຳຫຼວດ-ເກັບກູ້ ລບຕ ປະຈຳໄຕມາດ 03 ປີ 2024

### I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ໃນເວລາ 8:30-16:00 ໂມງ ຂອງວັນທີ 26 ກັນຍາ 2024 ທີ່ຫ້ອງປະຊຸມ ໂຮມແຮມ ລາວເທວ, ບ້ານ ຂຸນຕາ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ໄດ້ຈັດກອງປະຊຸມ ກຸ່ມວິຊາການສຳຫຼວດ ແລະ ເກັບກູ້ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ປະຈຳໄຕມາດ 03 ປີ 2024 ຂຶ້ນ, ພາຍໃຕ້ການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮັກສາການຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ແລະ ມີບັນດາທ່ານແຂກຖືກເຊີນເຂົ້າຮ່ວມທັງໝົດ: 40 ທ່ານ, ຍິງ 8 ທ່ານ (ລາຍລະອຽດມີລາຍຊື່ຄັດຕິດມາພ້ອມນີ້)

### II. ຈຸດປະສົງ

- ລາຍງານຜົນສຳເລັດ ການຈັດຕັ້ງປະຕິບັດວຽກງານການສຳຫຼວດ ແລະ ເກັບກູ້ ປະຈຳໄຕມາດ III ປີ 2024 ຂອງຂະແໜງການ.
- ລາຍງານຜົນການຝຶກອົບຮົມ ປັບປຸງມາດຕະຖານແຫ່ງຊາດ ແລະ ສາກົນ (NMAS and IMAS)
- ປຶກສາຫາລື ແລກປ່ຽນ ຄວາມຄິດເຫັນໃນການປັບປຸງມາດຕະຖານແຫ່ງຊາດ.
- ລາຍງານຜົນຂອງກອງປະຊຸມ ປຶກສາຫາລື ຮ່າງນະໂຍບາຍ ບຸລິມະສິດ ວຽກງານກວດກູ້ ຄັ້ງວັນທີ 5 ກັນຍາ 2024.
- ປຶກສາຫາລື ປະກອບຄຳຄິດຄຳເຫັນໃສ່ຮ່າງນະໂຍບາຍ ບຸລິມະສິດ ວຽກງານກວດກູ້ ລບຕ.

### III. ເນື້ອໃນກອງປະຊຸມ

- ທົບທວນຄືນກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ທີ່ຜ່ານມາ, ເຊິ່ງປະທານກອງປະຊຸມໄດ້ໃຫ້ຄຳເຫັນວ່າ: ໃຫ້ເອົາໃຈໃສ່ໃນການລາຍງານຜົນສຳເລັດຂອງການປະຕິບັດງານເຂົ້າໃນຖານຂໍ້ມູນໃຫ້ທັນເວລາ ເພື່ອຈະໄດ້ເອົາຂໍ້ມູນເຂົ້າໃນບົດລາຍງານ CCM ຂອງລັດຖະບານ ແລະ ຜູ້ເຂົ້າຮ່ວມເຫັນດີເປັນເອກະພາບນຳບົດບັນທຶກກອງປະຊຸມຜ່ານມາ.



สแกนด้วย CamScanner

- ລາຍງານຜົນສຳເລັດ ການຈັດຕັ້ງປະຕິບັດວຽກງານການສຳຫຼວດ ແລະ ເກັບກູ້ ປະຈຳໄຕມາດ 03 ປີ 2024, ຜ່ານການກວດກາຕົວເລກໃນຖານຂໍ້ມູນ ແຕ່ລະອົງການທີ່ສົ່ງຕົວເລກສຳຫຼວດ, ກວດກູ້ ລບຕ ເຂົ້າໃນຖານຂໍ້ມູນແມ່ນບໍ່ທັນບັນລຸ ຕາມແຜນທີ່ວາງໄວ້ໃນໄຕມາດ ທີ່ 03 ປີ 2024, ດ້ວຍສະພາບອາກາດທີ່ບໍ່ເອື້ອອຳນວຍ, ຖືກໃນຊ່ວງລະດູຝົນ. ມີບາງອົງການສົ່ງມາຕົວເລກບໍ່ທັນຄົບຖ້ວນ ຖ້າທຽບໃສ່ຕົວເລກທີ່ອົງການປະຕິບັດງານນຳສະເໜີຜົນສຳເລັດ ຂອງອົງການຕົນມາສະເໜີຕໍ່ກອງປະຊຸມ, ຈຶ່ງຢາກໃຫ້ແຕ່ລະອົງການປະຕິບັດງານສົ່ງໂຕເລກເຂົ້າມາໃຫ້ເປັນປົກກະຕິ ແລະ ທັນເວລາທີ່ໄດ້ກຳນົດໄວ້.
- ລາຍງານຄວາມຄືບໜ້າ ສຳລັບບົ່ມໃຫຍ່ທີ່ຢູ່ກ້ອງແລວສາຍໄຟ ບ້ານນ້ຳຊວນ, ເມືອງ ພູວົງ, ແຂວງ ອັດຕະປືກໍ່ແມ່ນໃຫ້ຮີບຮ້ອນປະສານງານກັບບໍລິສັດໄຟຟ້າລາວ ເພື່ອວາງແຜນ ແລະ ກຽມທຳລາຍ ເຊິ່ງມອບໃຫ້ອົງການ ເອັນພີເອ ແລະ ຄກລ ສົມທົບກັນ ແລະ ແຈ້ງຜົນຂອງການດຳເນີນງານ ມາຍັງຫ້ອງການ ຄຊກລ.
- ທ່ານປະທານ ໄດ້ມີຄຳເຫັນຕື່ມວ່າ: ໃຫ້ບັນດາອົງການປະຕິບັດງານສະຫຼຸບ MOU ໃນໄລຍະຜ່ານມາ, ເພື່ອຕໍ່ແຜນ MOU ສະບັບໃໝ່ໃຫ້ທັນເວລາ, ເນື້ອທີ່ທີ່ມີການສຳຫຼວດສຳເລັດແລ້ວໝັ້ນໃຈ 100% ແລ້ວບໍ່ວ່າປອດໄພ ຂໍໃຫ້ອົງການປະຕິບັດງານສຳຫຼວດຄືນ.
- ລາຍງານຄວາມຄືບໜ້າການປັບປຸງມາດຕະຖານແຫ່ງຊາດ ແມ່ນໄດ້ດຳເນີນແຜນດຳເນີນງານຮ່ວມກັບ UNDP ແລະ ຝ່າຍລາວແມ່ນ NRA ເປັນຜູ້ປະສານງານກັບທີ່ປຶກສາເພື່ອສັງລວມຂໍ້ມູນຂອງມາດຕະຖານ ເຊິ່ງໄດ້ມອບໃຫ້ອົງການປະຕິບັດງານ ຄົ້ນຄວ້າ ສັງລວມ ແລະ ສົ່ງຂໍ້ມູນໃຫ້ ຄຊກລໃນວັນທີ 30 ກັນຍານີ້ ໂດຍມີ 3 ໜ້າວຽກຫຼັກ: ວຽກງານສຳຫຼວດ, ກວດກູ້ ແລະ ທຳລາຍ ລບຕ. ລາຍລະອຽດ ແລະ ແຜນ ຈະໄດ້ປຶກສາຫາລືກັນພາຍຫຼັງວັນທີ 30 ກັນຍາ ທີ່ຊ່ຽວຊານທີ່ປຶກສາ ມາເຮັດວຽກຮ່ວມກັບຄະນະປັບປຸງມາດຕະຖານແຫ່ງຊາດ ເພື່ອປຶກສາແຜນດຳເນີນການລະອຽດ. ກ່ອນໜ້ານີ້ຍັງໄດ້ປຶກສາຫາລືຫຼາຍບັນຫາ ແລະ ມີຄຳຄິດເຫັນກົງໄປກົງມາຕໍ່ກອງປະຊຸມ ເຊິ່ງມີບາງໝວດທີ່ບໍ່ມີໃນມາດຕະຖານຈະໄດ້ເພີ່ມເຂົ້າໃໝ່, ແຕ່ສຳຄັນສຸດແມ່ນກອງປະຊຸມເຫັນດີ ໃຫ້ປັບປຸງແຕ່ລະບົດທີ່ມີຢູ່ໃນມາດຕະຖານນີ້ໃຫ້ສຳເລັດກ່ອນ ຫຼັງຈາກນັ້ນຈຶ່ງສືບຕໍ່ນຳບົດໃໝ່ເຂົ້າໃນມາດຕະຖານ.
- ລາຍງານຄວາມຄືບໜ້າຂອງ ກອງປະຊຸມ ຮ່າງຈັດບູລິມະສິດ: ພາຍຫຼັງກອງປະຊຸມຢູ່ປາກຊັນ ໃນວັນທີ 5 ກັນຍາ ມີຫຼາຍພາກສ່ວນປະກອບຄຳຄິດຄຳເຫັນ ເຊິ່ງຄວາມຕ້ອງການຂອງ ຄຊກລ ແມ່ນຢາກໄດ້ຮ່າງນະໂຍບາຍລວມ, ບໍ່ໄດ້ສະເພາະເຈາະຈົງລາຍລະອຽດຄືກັບ SOP, ສຳລັບເງື່ອນໄຂຕ່າງໆໃນນະໂຍບາຍນີ້ ຫຄຊກລ ຈະໄດ້ສົມທົບກັບ ສປຊ ເພື່ອປັບປຸງຄືນໃໝ່ ພາຍຫຼັງຮ່າງສຳເລັດຈະໄດ້ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງພິຈາລະນາປັບປຸງແກ້ໄຂເພື່ອໃຫ້ນຳເອົາໄປສະເໜີໃນຂັ້ນຕໍ່ໄປ, ເອກະສານດັ່ງກ່າວຢາກໃຫ້ສຳເລັດພາຍໃນເດືອນຕຸລານີ້.
- ສຳລັບເງື່ອນໄຂການຈັດບູລິມະສິດຕົວຈິງ ທີ່ປະຕິບັດຜ່ານມາຂອງອົງການປະຕິບັດງານແມ່ນສາມາດພັດທະນາຕາມນະໂຍບາຍ, ໃນແຕ່ລະໜ້າວຽກແມ່ນໃຫ້ອົງການປະຕິບັດງານນຳໃຊ້ 5 ເງື່ອນໄຂ ແລະ ໃຫ້ຄະແນນແມ່ນໃຫ້ອົງການປະຕິບັດງານເປັນຜູ້ຮັບຜິດຊອບ.



สแกนด้วย CamScanner

IV. ຂໍ້ສະຫຼຸບ ແລະ ຂໍ້ຕົກລົງໃນກອງປະຊຸມ:

- **ການປັບປຸງມາດຕະຖານແຫ່ງຊາດ:**

1. ກອງປະຊຸມໄດ້ເອກະພາບ ກ່ຽວກັບການປັບປຸງມາດຕະຖານແຫ່ງຊາດ ເອົາສະບັບພາສາອັງກິດເປັນຫຼັກກ່ອນ ເພາະສະບັບພາສາອັງກິດ ບໍ່ມີຫັຍງປ່ຽນແປງຫຼາຍ ພື້ນຖານແມ່ນຍອມຮັບໄດ້, ຫຼັງຈາກນັ້ນຈຶ່ງປັບປຸງພາສາລາວ ແລະ ແປຄືນໃໝ່ເພາະຜ່ານມາ ການແປຈາກພາສາອັງກິດ ມາເປັນພາສາລາວມີຫຼາຍສິ່ງຄວນທີ່ບໍ່ທັນແທດເໝາະ ເປັນຕົ້ນຄຳສັບດ້ານເຕັກນິກ.
2. ກອງປະຊຸມໄດ້ຕົກລົງເຫັນດີຮັບເອົາແຜນເຄື່ອນໄຫວ Action Plan ຕາມການຕົກລົງໃນກອງທົບທວນຄືນມາດຕະຖານແຫ່ງຊາດ ປະຊຸມທ້າຍປີ 2023 ແລະ ອີງຕາມຂໍ້ຕົກລົງແຕ່ງຕັ້ງຄະນະວິຊາການທີ່ປະທານ ຄຊກລ ຮັບຮອງ, ສະບັບ ເລກທີ 01 ມັງກອນ ປີ 2024 ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບຄົ້ນຄ້ວາ ແລະ ປັບປຸງມາດຕະຖານແຫ່ງຊາດ, ເບື້ອງຫ້ອງການ ຄຊກລ ແຕ່ງຕັ້ງ 1 ທ່ານ ເພື່ອປະສານງານໃນການສັງລວມເອກະສານ ແລະ ປະສານງານກັບທີ່ປຶກສາຈາກ ຢູເອັນດີພີ.
3. ເອກະສານທີ່ຈະຕ້ອງໄດ້ປັບປຸງ ນອກຈາກບົດທີ່ 24, ລວມມີ: ການສຳຫຼວດ ແລະ ການປົດປ່ອຍທີ່ດິນ ມອບໃຫ້ອົງການເອັນພີເອ ຮັບຜິດຊອບ, ກວດກູ້ ລບຕ ມອບໃຫ້ອົງການ ຮາໂລທຣັດສ໌ ແລະ ວຽກທຳລາຍ ອົງການແມັກ ຮັບຜິດຊອບ ເອກະສານທີ່ໄດ້ຄົ້ນຄ້ວາ ຈະສົ່ງໃຫ້ ຜູ້ຮັບຜິດຊອບສັງລວມ ໃນວັນທີ່ 30 ກັນຍາ 2024.
4. ສຳລັບທີ່ປຶກສາ ທີ່ຈະມາຮ່ວມກັບຄະນະປັບປຸງມາດຕະຖານ ຈະເລີ່ມວຽກໃນວັນທີ 1 ຕຸລາ 2024 ຄາດວ່າຈະສັງລວມເອກະສານທີ່ໄດ້ປັບປຸງໃຫ້ສຳເລັດພາຍໃນ 3 ເດືອນ, ຊຶ່ງຈະສຳເລັດໃນທ້າຍປີ 2024.
5. ກອງປະຊຸມຕົກລົງ ການປັບປຸງແມ່ນອີງໃສ່ຮູບແບບ ມາດຕະຖານສາກົນເປັນຫຼັກກ່ອນ ເພື່ອຈະເປັນການງ່າຍໃນການປັບປຸງໃນອະນາຄົດ.

- **ນະໂຍບາຍບູລິມະສິດ ການກວດກູ້ ລະເບີດບໍ່ທັນແຕກ**

1. ກອງປະຊຸມເຫັນດີ ໃຫ້ປັບປຸງເປັນລັກສະນະ ນະໂຍບາຍຂອງຂະແໜງການ ລບຕ, ຈະບໍ່ແມ່ນບູລິມະສິດແຫ່ງຊາດ. ອົງການທີ່ກ່ຽວຂ້ອງພຽງສະໜອງແຜນຂອງຕົນເຂົ້າໃນແຜນກວດກູ້ ລບຕ ເພື່ອເຊື່ອມສານແຜນພັດທະນາເສດຖະກິດສັງຄົມ ທີ່ໄດ້ຮັບທຶນຈາກລັດຖະບານ ແລະ ຕ່າງປະເທດ.
2. ເອກະສານນະໂຍບາຍ ບູລິມະສິດຄາດວ່າຈະໃຫ້ສຳເລັດໃນເດືອນ 11 ປີ 2024, ສ່ວນເງື່ອນໄຂໃນການຈັດຈັດແຕ່ລະໜ້າວຽກ ແມ່ນອົງການປະຕິບັດງານກຳນົດລາຍລະອຽດຕາມສະພາບຄວາມເປັນຈິງ.
3. ເອກະສານດັ່ງກ່າວ ພາຍຫຼັງຮ່າງສຳເລັດຈະສະເໜີໃຫ້ກອງເລຂາປະທານ ຄຊກລ ກວດກາຄືນດ້ານຄວາມຖືກຕ້ອງ ແລະ ນຳສະເໜີຮັບຮອງ.

**ປະທານກອງປະຊຸມ** | **ຜູ້ບັນທຶກກອງປະຊຸມ**

ຫ້ອງການ ຄຊກລ

**ບຸນເພັງ ສີສະຫວັດ**



สแกนด้วย CamScanner